INEWS ຂ່າວ

ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍຊາວໜຸ່ມ ທຫລ.ຊຂ ເຂົ້າຮ່ວມຂະບວນການອອກແຮງງານອະນາໄມ



ໃນຕອນເຊົ້າຂອງ ວັນທີ 30 ມິຖຸນາ 2021 ໜ່ວຍຊາວໜຸ່ມສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ເຂົ້າຮ່ວມຂະບວນການອອກແຮງງານອະນາໄມລວມ ຢູ່ສະຖານທີ່ອານຸສາວະລີນັກຮົບນິລະນາມ ລາວ-ຫວຽດນາມ ເປັນກຽດນຳພາຂະບວນການໂດຍ ສະຫາຍ ນາງ ອ່ອນຈັນ ບຸນທະສິມ ຄະນະພັກ, ຄະນະບໍລິຫານງານຊາວໜຸ່ມແຂວງຊຽງຂວາງ, ມີບັນດາຊາວໜຸ່ມພະແນກການ-ກົມກອງອ້ອມຂ້າງແຂວງ ເຂົ້າຮ່ວມຢ່າງເປັນຂະບວນການຟົດຟື້ນ ຫຼາຍກວ່າ 300 ສະຫາຍ.

ຈຸດປະສົງໃນການອອກແຮງງານອະນາໄມໃນຄັ້ງນີ້ ເພື່ອຂໍ່ານັບຮັບຕ້ອນຮັບຕ້ອນວັນຄ້າຍວັນເກີດທ່ານ ປະທານ ສຸພານຸວົງ ຄົບຮອບ 112 ປີ (13 ກໍລະກົດ 1909 – 13 ກໍລະກົດ 2021), ວັນເຊັນສົນທິສັນຍາມິດຕະພາບ - ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 44 ປີ (18 ກໍລະກົດ 1977 – 18 ກໍລະກົດ 2021) ແລະ ກໍ່ເພື່ອເປັນການສະແດງຄວາມກະຕັນຍູຮູ້ບຸນຄຸນຕໍ່ອາດີດທ່ານຜູ້ນຳທີ່ແສນເຄົາລົບຮັກ, ນາຍ ແລະ ພົນທະຫານ ລາວ-ຫວຽດນາມ ຕະຫຼອດຮອດສະມາຊິກຊາວໜຸ່ມ-ໄວໜຸ່ມ ທີ່ໄດ້

ເສຍສະຫຼະເລືອດເນື້ອເຫື່ອແຮງ ແລະ ຊີວິດອິນຊີ ເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ການສ້າງຂະບວນການອອກແຮງງານໃນຄັ້ງນີ້ໄດ້ມີການເກັບຂີ້ເຫຍື້ອ, ຖາງປ່າ, ຕັດຫຍ້າໃນເຂດທີ່ຣົກເຮື້ອ ເພື່ອເຮັດໃຫ້ສະຖານທີ່ ອານຸສາວະລີນັກຮົບນິລະນາມ ລາວ-ຫວຽດນາມ ແຫ່ງນີ້ມີຄວາມສະອາດ ແລະ ຈົບງາມ.



✍ ຂ່າວ: ສຸກສະຫວັນ ພິມມະວົງ